## ປຶ້ມຝຶກຫັດ

# ສິ່ງແວດລ້ອມອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາ ປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ປຶ້ມເຝິກຫັດ

# ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 3

ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ບຸນຜົງ ສີລາເດດ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຣູນ ຫຼວງໄຊຊະນະ
ເກດ ພັນລັກ

ເຂົ້າໜ້າໂດຍ ດວງມາລາ ນາກບຸນຕາ

ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍສິ່ງແວດລ້ອມອ້ອມຕົວເຮົາເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 5 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງໂຮງຮຽນມີດັ່ງນີ້:

1. ສິ່ງແວດລ້ອມທາງທຳມະຊາດກ່ຽວກັບສັດ.
2. ສິ່ງແວດລ້ອມທາງທຳມະຊາດກ່ຽວກັບພືດ ແລະ ອາກາດ.
3. ສິ່ງແວດລ້ອມທີ່ເກີດຂຶ້ນຕາມທຳມະຊາດ.
4. ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງ ໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

ໜ້າ


ສິ່ງແວດລ້ອມອ້ອມຕົວເຮົາ .................................................... 1

**1. ສິ່ງແວດລ້ອມທາງທຳມະຊາດກ່ຽວກັບສັດ ອາທິດທີ 1 ........................................ 1**

- ຊ້າງ ແລະ ມ້າ .................................................... 3
- ແບ້ ແລະ ກະຕ່າຍ .................................................... 4
- ປາ ແລະ ກຸ້ງ .................................................... 5
- ຫ່ານ .................................................... 6
- ນົກແກ້ວ .................................................... 7
- ງູ ແລະ ແຂ້ .................................................... 8

**2. ສິ່ງແວດລ້ອມທາງທຳມະຊາດກ່ຽວກັບພືດ ແລະ ອາກາດ ອາທິດທີ 2 ........................ 9**

- ພືດໃຫ້ໃບ .................................................... 10
- ພືດໃຫ້ດອກ .................................................... 11
- ຄຸນປະໂຫຍດ ແລະ ການບົວລະບັດຮັກສາດອກໄມ້ .................................................... 12
- ພືດໃຫ້ໝາກ .................................................... 13
- ຄວາມແຕກຕ່າງຂອງລຳຕົ້ນພືດ.................................................... 14
- ຄວາມແຕກຕ່າງຂອງດອກພືດ .................................................... 15
- ຄວາມແຕກຕ່າງຂອງໝາກພືດ .................................................... 16
- ອາກາດ ແລະ ຄຸນປະໂຫຍດຂອງອາກາດ .................................................... 17

**3. ສິ່ງແວດລ້ອມທີ່ເກີດຂຶ້ນຕາມທຳມະຊາດ ອາທິດທີ 3 ........................................ 18**

- ຄວາມໝາຍ ແລະ ຊື່ຂອງຖ້ຳ.................................................... 19
- ຖ້ຳທ່ານໄກສອນ .................................................... 20
- ຖ້ຳຕິ່ງ .................................................... 21
- ຖ້ຳປາຝາ .................................................... 22
- ຄວາມໝາຍ ແລະ ຊື່ຂອງນ້ຳຕົກຕາດ.................................................... 23
- ນ້ຳຕົກຕາດກວາງຊີ .................................................... 24

- ນ້ຳຕົກຕາດຄອນພະເພັງ .............................................................. 25
- ການປົກປັກຮັກສາ ແລະ ການປະຕິບັດຕົນ.............................................. 26

4. **ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ  ອາທິດທີ 4** ................................................ 27

- ສະຖານທີ່ສຳຄັນຕ່າງໆທີ່ຄົນສ້າງຂຶ້ນ.................................................... 28
- ທາດຫຼວງວຽງຈັນ............................................................................. 29
- ລັກສະນະ ແລະ ຄວາມສຳຄັນຂອງທາດຫຼວງວຽງຈັນ ................................. 30
- ວັດພູສີ............................................................................................ 31
- ລັກສະນະ ແລະ ຄວາມສຳຄັນຂອງວັດພູສີ.................................................. 31
- ທາດອີງຮັງ........................................................................................ 33
- ລັກສະນະ ແລະ ຄວາມສຳຄັນຂອງທາດອີງຮັງ ............................................. 34
- ວັດພູຈຳປາສັກ ................................................................................. 35
- ລັກສະນະ ແລະ ຄວາມສຳຄັນຂອງວັດພູຈຳປາສັກ ....................................... 36

# ສິ່ງແວດລ້ອມທາງທຳມະຊາດກ່ຽວກັບສັດ









## ຫົວຂໍ້ການຮຽນອາທິດທີ 1 ສິ່ງແວດລ້ອມທາງທຳມະຊາດກ່ຽວກັບສັດ.

1. ສັດບົກ.
2. ສັດບົກ (ຕໍ່).
3. ສັດນ້ຳ.
4. ສັດປີກ.
5. ສັດເລືອຄານ.

# ແບ້ ແລະ ກະຕ່າຍ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ, ທີ່ຢູ່ອາໄສ, ອາຫານ, ຄຸນປະໂຫຍດ, ການດູແລຮັກສາແບ້, ກະຕ່າຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ແບ້ ແລະ ກະຕ່າຍມີລັກສະນະແນວໃດ? ອາໄສຢູ່ໃສ ແລະ ກິນຫຍັງເປັນອາຫານ? ມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ແບ້ເປັນສັດທີ່ມີສີດຳ, ສີນ້ຳຕານ, ສີຂາວ, ມີເຂົາ, ມີ 4 ຂາ, ມີ ຫາງສັ້ນ; ເຄື່ອນທີ່ດ້ວຍການຍ່າງ ແລະ ແລ່ນ; ແບ້ອາໄສຢູ່ໃນຄອກ, ທົ່ງນາ, ເດີ່ນຫຍ້າ ຫຼື ຟາມ; ແບ້ເປັນສັດທີ່ກິນພືດ ແລະ ນ້ຳເປັນອາຫານ; ຄຸນປະໂຫຍດແບ້ໃຫ້ຊີ້ນ ແລະ ນົມ; ກະຕ່າຍເປັນສັດທີ່ມີສີນ້ຳຕານ, ສີແດງ, ສີຂາວ,  ມີ 4 ຂາ, ມີຫູຍາວ, ມີຫາງສັ້ນ; ເຄື່ອນທີ່ດ້ວຍການແລ່ນ ແລະ ເຕັ້ນ; ກະຕ່າຍເປັນສັດລ້ຽງອາໄສຢູ່ໃນຄອກ ແລະ ກະຕ່າຍປ່າຢູ່ໃນປ່າ; ກະຕ່າຍກິນນ້ຳ, ຫຍ້າ, ຜັກ; ຄຸນປະໂຫຍດໃຫ້ຊີ້ນເປັນອາຫານ ແລະ ຂົນໃຊ້ເຮັດເຄື່ອງນຸ່ງ, ເຄື່ອງໃຊ້ ແລະ ໃຫ້ຄວາມສວຍງາມການດູແລຮັກສາໃຫ້ນ້ຳ, ອາຫານ, ໃຫ້ທີ່ຢູ່ອາໄສ ແລະ ປິ່ນປົວເວລາເຈັບເປັນ.
- ໃຫ້ເດັກນ້ອຍທາສີຮູບພາບແບ້ ແລະ ກະຕ່າຍໂດຍນຳໃຊ້ສີຕາມໃຈ.

# ຫ່ານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ, ທີ່ຢູ່ອາໄສ, ອາຫານ, ຄຸນປະໂຫຍດ, ການດູແລຮັກສາຫ່ານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫ່ານມີລັກສະນະແນວໃດ? ຫ່ານອາໄສຢູ່ໃສ ແລະ ກິນຫຍັງເປັນອາຫານ? ຫ່ານມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງຫ່ານມີສົບໃຫຍ່ເປ, ມີ 2 ຂາ, ມີປີກ, ມີຂົນສີຂາວ, ດຳພົ່ນ, ມີຫາງສັ້ນ; ເຄື່ອນທີ່ດ້ວຍການຍ່າງ; ຫ່ານອາໄສຢູ່ໃນລົກ ຫຼື ຄອກ; ຫ່ານກິນຮຳ, ເຂົ້າເປືອກ, ຫົວອາຫານ ແລະ ນ້ຳ; ຄຸນປະໂຫຍດຂອງຫ່ານໃຫ້ຊີ້ນ ແລະ ໄຂ່ເປັນອາຫານ; ການດູແລຮັກສາ ໃຫ້ອາຫານ, ໃຫ້ທີ່ຢູ່ອາໄສ ແລະ ປິ່ນປົວມັນເວລາເຈັບເປັນ.
- ໃຫ້ເດັກນ້ອຍທາສີຮູບພາບຫ່ານໂດຍນຳໃຊ້ສີຕາມໃຈ.

# ນົກແກ້ວ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ, ທີ່ຢູ່ອາໄສ, ອາຫານ, ຄຸນປະໂຫຍດ, ການດູແລຮັກສາ ນົກແກ້ວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ນົກແກ້ວມີລັກສະນະແນວໃດ? ນົກແກ້ວອາໄສຢູ່ໃສ ແລະ ກິນຫຍັງເປັນອາຫານ? ນົກແກ້ວມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງນົກແກ້ວມີສົບສີແດງ, ມີ 2 ຂາ, ມີຂົນສີຂຽວ, ມີຫາງ; ເຄື່ອນທີ່ດ້ວຍການບິນ; ນົກແກ້ວອາໄສຢູ່ຕາມງ່າໄມ້, ໂກນໄມ້, ຄອກ ຫຼື ກົງ; ອາຫານຂອງນົກແກ້ວກິນໝາກໄມ້, ແມງໄມ້ ແລະ ນ້ຳ; ຄຸນປະໂຫຍດຂອງນົກແກ້ວເປັນສັດລ້ຽງທີ່ໃຫ້ຄວາມສວຍງາມ ແລະ ຊ່ວຍກິນແມງໄມ້; ການດູແລຮັກສາໃຫ້ນ້ຳ, ອາຫານ, ທີ່ຢູ່ອາໄສ ແລະ ປິ່ນປົວມັນເວລາເຈັບເປັນ.
- ໃຫ້ເດັກນ້ອຍທາສີຮູບພາບນົກແກ້ວໂດຍນຳໃຊ້ສີຕາມໃຈ

# ງູ ແລະ ແຂ້

 

**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ, ທີ່ຢູ່ອາໄສ, ອາຫານ, ຄຸນປະໂຫຍດຂອງງູ ແລະ ແຂ້; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ງູ ແລະ ແຂ້ມີລັກສະນະແນວໃດ? ອາໄສຢູ່ໃສ ແລະ ກິນຫຍັງເປັນອາຫານ? ມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງງູຕົນຕົວປົກຫຸ້ມດ້ວຍໜັງ ແລະ ເກັດແລບມີສີດຳ, ສີນ້ຳຕານ, ລີ້ນຍາວ; ງູອາໄສຢູ່ໃນປ່າ, ໃນຮູ ຫຼື ໂກນໄມ້; ອາຫານຂອງງູ ແລະ ແຂ້ກິນສັດ; ລັກສະນະຂອງແຂ້ມີໜັງ ແລະ ເກັດຫຸ້ມຫໍ່ຕົນຕົວ, ປາກຍາວ, ມີແຂ້ວ, ມີ 4 ຂາ, ຫາງຍາວ; ແຂ້ອາໄສຢູ່ໃນນ້ຳ; ຄຸນປະໂຫຍດຂອງງູ ແລະ ແຂ້ເອົາໜັງມາເຮັດເຄື່ອງໃຊ້ ແລະ ເຄື່ອງປະດັບ.
- ໃຫ້ເດັກນ້ອຍທາສີຮູບພາບງູ ແລະ ແຂ້ໂດຍນຳໃຊ້ສີຕາມໃຈ.

# ສິ່ງແວດລ້ອມທາງທຳມະຊາດກ່ຽວກັບພືດ ແລະ ອາກາດ







**ຫົວຂໍ້ການຮຽນອາທິດທີ 2 ສິ່ງແວດລ້ອມທາງທຳມະຊາດກ່ຽວກັບພືດ ແລະ ອາກາດ**

1. ພືດໃຫ້ໃບ.
2. ພືດໃຫ້ດອກ.
3. ພືດໃຫ້ໝາກ.
4. ຄວາມແຕກຕ່າງຂອງພືດ.
5. ອາກາດ.

# ພືດໃຫ້ໃບ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກພືດໃຫ້ໃບ, ຄຸນປະໂຫຍດ, ການບົວລະບັດຮັກສາຜັກຫົມ, ຜັກກາດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ພືດໃຫ້ໃບມີຫຍັງແດ່? ຜັກຫົມ ແລະ ຜັກກາດມີລັກສະນະແນວໃດ? ມີຄຸນປະໂຫຍດຫຍັງແດ່? ເຮົາຄວນບົວລະບັດຮັກສາຜັກຫົມ ແລະ ຜັກກາດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ພືດໃຫ້ໃບມີຜັກຫົມມີຮາກແກ້ວ, ຮາກຝອຍ, ລຳຕົ້ນ, ໃບສ້ວຍ, ດອກ ແລະ ໝາກ; ຜັກກາດມີຮາກແກ້ວ, ຮາກຝອຍ, ລຳຕົ້ນ, ໃບຍາວ, ດອກ ແລະ ໝາກ; ຄຸນປະໂຫຍດຂອງຜັກຫົມ ແລະ ຜັກກາດໃຊ້ເປັນອາຫານທີ່ມີວິຕາມິນຕໍ່ຮ່າງກາຍ; ການບົວລະບັດປູກ, ຫົດນ້ຳ, ໃສ່ຝຸ່ນ, ພວນດິນ, ບໍ່ເດັດໃບ ແລະ ບໍ່ທຳລາຍ.
- ໃຫ້ເດັກນ້ອຍທາສີຮູບພາບຜັກຫົມ ແລະ ຜັກກາດໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດ ແລະ ການບົວລະບັດຮັກສາດອກໄມ້





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດ, ການບົວລະບັດຮັກສາດອກໄມ້; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍປູກດອກໄມ້ບໍ? ດອກໄມ້ມີຄຸນປະໂຫຍດຫຍັງແດ່? ເຮົາຄວນບົວລະບັດຮັກສາດອກໄມ້ແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຄຸນປະໂຫຍດເອົາໄວ້ບູຊາ, ປະດັບປະດາ ແລະ ໃຫ້ຄວາມສວຍງາມ; ດອກຈໍາປາຍັງເປັນດອກໄມ້ປະຈໍາຊາດຂອງລາວເຮົາ; ການບົວລະບັດຮັກສາປູກ, ຫົດນໍ້າ, ພວນດິນ, ບໍ່ເດັດ ແລະ ບໍ່ທໍາລາຍ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ດອກໄມ້ໂດຍນໍາໃຊ້ສີຕາມໃຈ.

# ພືດໃຫ້ໝາກ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກພືດໃຫ້ໝາກ, ຄຸນປະໂຫຍດ, ການບົວລະບັດຮັກສາຕົ້ນສາລີ, ໝາກຖົ່ວ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ພືດໃຫ້ໝາກມີຫຍັງແດ່? ສາລີ ແລະ ຖົ່ວມີຄຸນປະໂຫຍດຫຍັງແດ່? ເຮົາຄວນບົວລະບັດຮັກສາຕົ້ນສາລີ ແລະ ຕົ້ນຖົ່ວແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ພືດໃຫ້ໝາກມີຕົ້ນສາລີມີຮາກຝອຍ, ລຳຕົ້ນເປັນປ້ອງ, ໃບຍາວ, ດອກເປັນພົ້ວ ແລະ ໝາກເປັນມານ; ໝາກຖົ່ວມີຮາກແກ້ວ, ຮາກຝອຍ, ລຳຕົ້ນເປັນເຄືອ, ໃບສ້ວຍ, ດອກເປັນພົ້ວ ແລະ ໝາກຍາວ (ຝັກ); ຄຸນປະໂຫຍດຂອງສາລີ ແລະ ໝາກຖົ່ວເປັນອາຫານ; ການບົວລະບັດຮັກສາປູກ, ຫົດນ້ຳ, ພວນດິນ, ບໍ່ເດັດໃບ ແລະ ບໍ່ທຳລາຍ.
- ໃຫ້ເດັກນ້ອຍທາສີຮູບພາບສາລີ ແລະ ໝາກຖົ່ວໂດຍນຳໃຊ້ສີຕາມໃຈ.

# ຄວາມແຕກຕ່າງຂອງລຳຕົ້ນພືດ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄວາມແຕກຕ່າງຂອງຕົ້ນພືດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ພືດທີ່ມີລຳຕົ້ນທີ່ເປັນປ້ອງ, ເປັນເຄືອ, ເປັນພຸ່ມມີຕົ້ນຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ຄວາມແຕກຕ່າງຂອງລຳຕົ້ນ ພືດມີລຳຕົ້ນເປັນປ້ອງ, ເປັນເຄືອ ແລະ ເປັນພຸ່ມ; ລຳຕົ້ນເປັນປ້ອງ ມີສາລີ, ອ້ອຍ; ລຳຕົ້ນເປັນເຄືອມີໝາກຖົ່ວ, ໝາກອຶ, ໝາກແຕງ; ລຳຕົ້ນເປັນພຸ່ມມີໝາກເຜັດ, ໝາກເຂືອ.
- ໃຫ້ເດັກນ້ອຍທາສີຮູບພາບພືດໂດຍນຳໃຊ້ສີຕາມໃຈ.

# ຄວາມແຕກຕ່າງຂອງດອກພືດ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄວາມແຕກຕ່າງຂອງດອກພືດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ດອກພືດຕ່າງກັນ ຫຼື ຄືກັນ? ດອກມີຄວາມແຕກຕ່າງກັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຄວາມແຕກຕ່າງຂອງດອກພືດດອກໃຫຍ່-ນ້ອຍ; ດອກດ່ຽວ, ດອກເປັນພົ້ວ; ດອກດ່ຽວດອກດາວເຮືອງ, ດອກໝາກອຶ, ດອກຕາເວັນ, ດອກກຸຫຼາບ; ດອກເປັນພົ້ວດອກສາລີ, ດອກຄູນ, ດອກຈຳປາ, ດອກໝາກມ່ວງ.
- ໃຫ້ເດັກນ້ອຍທາສີຮູບພາບດອກພືດໂດຍນຳໃຊ້ສີຕາມໃຈ.

# ອາກາດ ແລະ ຄຸນປະໂຫຍດຂອງອາກາດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກອາກາດ, ຄຸນປະໂຫຍດຂອງອາກາດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ອາກາດມີຢູ່ໃສແດ່? ອາກາດມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍສະຫຼຸບ: ອາກາດມີຢູ່ທົ່ວໄປອ້ອມຕົວເຮົາແຕ່ເຮົາເບິ່ງບໍ່ເຫັນ; ຄຸນປະໂຫຍດຂອງອາກາດເຮັດໃຫ້ຄົນ, ສັດ, ພືດຕ້ອງການອາກາດເພື່ອຫາຍໃຈ, ໃສ່ລົມຕີນລົດ, ໃສ່ລົມໝາກບານ, ຖ້າບໍ່ມີອາກາດຫາຍໃຈຄົນ, ສັດ, ພືດກໍ ຈະຕາຍ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ໝາກບານໂດຍນໍາໃຊ້ສີຕາມໃຈ.

# ສິ່ງແວດລ້ອມທີ່ເກີດຂຶ້ນຕາມທຳມະຊາດ





**ຫົວຂໍ້: ການຮຽນອາທິດທີ 3 ສິ່ງແວດລ້ອມທີ່ເກີດຂຶ້ນຕາມທຳມະຊາດ:**

1. ຖ້ຳ.
2. ຖ້ຳ ທ່ານ ໄກສອນ, ຖ້ຳຕິ່ງ, ຖ້ຳປາຝາ.
3. ນ້ຳຕົກຕາດ.
4. ນ້ຳຕົກຕາດກວາງຊີ ແລະ ຄອນພະເພັງ.
5. ການປົກປັກຮັກສາ ແລະ ການປະຕິບັດຕົນ

# ຄວາມໝາຍ ແລະ ຊື່ຂອງຖ້ຳ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄວາມໝາຍຂອງຖ້ຳ, ຊື່ຖ້ຳທີ່ເກີດຕາມທຳມະຊາດ; ຝຶກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຖ້ຳໝາຍເຖິງຫຍັງ? ຫຼານເຄີຍເຫັນຖ້ຳບໍ?
- ໃຫ້ເດັກນ້ອຍສະຫຼຸບ: ຖ້ຳໝາຍເຖິງຮູທີ່ເປັນໂພ້ງກວ້າງຢູ່ໃນພູຫີນ ຫຼື ຜາ; ຊື່ຖ້ຳທີ່ເກີດຕາມທຳມະຊາດ ມີຖ້ຳທ່ານໄກສອນ, ຖ້ຳຕິ່ງ, ຖ້ຳປາຝາ ແລະ ຖ້ຳທີ່ມີໃນທ້ອງຖິ່ນ
- ໃຫ້ເດັກນ້ອຍທາສີຮູບພາບຖ້ຳໂດຍນຳໃຊ້ສີຕາມໃຈ

# ຖ້ຳທ່ານໄກສອນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ ແລະ ຄວາມສຳຄັນ ຂອງຖ້ຳທ່ານໄກສອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຖ້ຳທ່ານໄກສອນຕັ້ງຢູ່ໃສ ແລະ ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຖ້ຳທ່ານໄກສອນຕັ້ງຢູ່ບ້ານ ນາໄກ່ ເມືອງວຽງໄຊ ແຂວງຫົວພັນ; ຄວາມສຳຄັນເປັນບ່ອນເຮັດວຽກໃນສະໄໝຕໍ່ສູ້ກູ້ຊາດຂອງທ່ານຜູ້ນຳ ແລະ ເປັນສະຖານທີ່ທາງປະຫວັດສາດ.
- ໃຫ້ເດັກນ້ອຍທາສີຮູບພາບຖ້ຳໂດຍນຳໃຊ້ສີຕາມໃຈ.

# ຖ້ຳຕິ່ງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ ແລະ ຄວາມສຳຄັນຂອງຖ້ຳຕິ່ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຖ້ຳຕິ່ງຕັ້ງຢູ່ໃສ ແລະ ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຖ້ຳຕິ່ງຕັ້ງຢູ່ບ້ານປາກອູ ເມືອງປາກອູ ແຂວງຫຼວງພະບາງ; ຄວາມສຳຄັນຂອງຖ້ຳຕິ່ງໃນຖ້ຳມີພະຫຼາຍຮູບ, ທຳມະຊາດສວຍງາມເປັນສະຖານທີ່ທ່ອງທ່ຽວ ແລະ ເປັນແຫຼ່ງສຶກສາຫາຂໍ້ມູນຄວາມຮູ້, ທາງດ້ານປະຫວັດສາດ.
- ໃຫ້ເດັກນ້ອຍທາສີຮູບພາບຖ້ຳໂດຍນຳໃຊ້ສີຕາມໃຈ.

# ຖ້ຳປາຝາ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ ແລະ ຄວາມສຳຄັນຂອງຖ້ຳປາຝາ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຖ້ຳປາຝາຕັ້ງຢູ່ໃສ ແລະ ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ຖ້ຳປາຝາຕັ້ງຢູ່ບ້ານນາຄັນຊ້າງເມືອງທ່າແຂກ ແຂວງຄຳມ່ວນ; ຄວາມສຳຄັນ ເປັນສະຖານທີ່ທ່ອງທ່ຽວ ແລະ ເປັນບ່ອນສຶກສາຫາຂໍ້ມູນຄວາມຮູ້ທາງປະຫວັດສາດ.
- ໃຫ້ເດັກນ້ອຍທາສີຮູບພາບຖ້ຳໂດຍນຳໃຊ້ສີຕາມໃຈ.

# ຄວາມໝາຍ ແລະ ຊື່ຂອງນ້ຳຕົກຕາດ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່, ຄວາມໝາຍຂອງນ້ຳຕົກຕາດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ນ້ຳຕົກຕາດໝາຍເຖິງຫຍັງ? ຫຼານເຄີຍເຫັນນ້ຳຕົກຕາດບໍ? ມີນ້ຳຕົກຕາດໃດແດ່?
- ໃຫ້ເດັກນ້ອຍສະຫຼຸບ: ນ້ຳຕົກຕາດໝາຍເຖິງນ້ຳທີ່ໄຫຼລົງຈາກພູ ຫຼື ຫີນຜາທີ່ສູງຊັນ; ຊື່ນ້ຳຕົກຕາດທີ່ເກີດຈາກທຳມະຊາດມີນ້ຳຕົກຕາດກວາງຊີ, ນ້ຳຕົກຕາດຄອນພະເພັງ ແລະ ນ້ຳຕົກຕາດທີ່ມີໃນທ້ອງຖິ່ນ.
- ໃຫ້ເດັກນ້ອຍທາສີຮູບພາບນ້ຳຕົກຕາດໂດຍນຳໃຊ້ສີຕາມໃຈ.

# ນ້ຳຕົກຕາດກວາງຊີ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ, ຄວາມສຳຄັນຂອງນ້ຳຕົກຕາດກວາງຊີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ນ້ຳຕົກຕາດກວາງຊີຕັ້ງຢູ່ໃສ ແລະ ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ນ້ຳຕົກຕາດກວາງຊີຕັ້ງຢູ່ບ້ານ ເມືອງຂາຍ, ເມືອງ ແລະ ແຂວງຫຼວງພະບາງ, ມີພະພຸດທະຮູບ, ທຳມະຊາດສວຍງາມ; ຄວາມສຳຄັນເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ.
- ໃຫ້ເດັກນ້ອຍທາສີຮູບພາບນ້ຳຕົກຕາດໂດຍນຳໃຊ້ສີຕາມໃຈ.

# ນ້ຳຕົກຕາດຄອນພະເພັງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ, ຄວາມສຳຄັນຂອງນ້ຳຕົກຕາດຄອນພະເພັງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ນ້ຳຕົກຕາດຄອນພະເພງຕັ້ງຢູ່ໃສ ແລະ ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ນ້ຳຕົກຕາດຄອນພະເພັງຕັ້ງຢູ່ບ້ານທ່າຄໍ້, ເມືອງໂຂງ, ແຂວງຈຳປາສັກ; ຄວາມສຳຄັນເປັນແຫຼ່ງທ່ອງທ່ຽວທາງທຳມະຊາດ.
- ໃຫ້ເດັກນ້ອຍທາສີຮູບພາບນ້ຳຕົກຕາດໂດຍນຳໃຊ້ສີຕາມໃຈ.

# ການປົກປັກຮັກສາ ແລະ ການປະຕິບັດຕົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປົກປັກຮັກສາສະຖານທີ່ທ່ອງທ່ຽວຕ່າງໆ, ການປະຕິບັດຕົນໃນການໄປທ່ຽວຊົມສະຖານທີ່ຕ່າງໆ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຄວນປົກປັກຮັກສາສະຖານທີ່ທ່ອງທ່ຽວແນວໃດ? ເມື່ອເວລາເຮົາໄປທ່ຽວຊົມສະຖານທີ່ທ່ອງທ່ຽວຕ່າງໆ ເຮົາຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ການປົກປັກຮັກສາສະຖານທີ່ທ່ອງທ່ຽວຕ່າງໆຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ, ຖ່າຍໜັກ-ຖ່າຍເບົາໃສ່ວິດ ຫຼື ຫ້ອງນ້ຳ, ປູກຕົ້ນໄມ້; ການປະຕິບັດຕົນເຂົ້າຊົມສະຖານທີ່ສຳຄັນ ຕ້ອງລຽນແຖວຊື້ປີ້ ແລະ ເຂົ້າເບິ່ງບໍ່ຈັບບາຍສິ່ງຕ່າງໆ, ບໍ່ເວົ້າສຽງດັງເກີນໄປ ແລະ ປະຕິບັດຕົນໃຫ້ສົມກັບຄຳຂວັນທີ່ວ່າສະອາດ, ສີຂຽວ, ສະຫງົບ, ສີວິໄລ, ສະຫວ່າງສະໄຫວ ແລະ ມີສະເໜ່.
- ໃຫ້ເດັກນ້ອຍທາສີຮູບພາບຖ້ຳໂດຍນຳໃຊ້ສີຕາມໃຈ.

# ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ









## ຫົວຂໍ້: ການຮຽນອາທິດທີ 4 ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ

1. ສະຖານທີ່ສຳຄັນຕ່າງໆ.
2. ທາດຫຼວງວຽງຈັນ.
3. ວັດພູສີ.
4. ທາດອີງຮັງ.
5. ວັດພູຈຳປາສັກ.

# ສະຖານທີ່ສຳຄັນຕ່າງໆທີ່ຄົນສ້າງຂຶ້ນ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສະຖານທີ່ສຳຄັນທີ່ຄົນສ້າງຂຶ້ນ ການປົກປັກຮັກສາ ແລະ ການປະຕິບັດຕົນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ສະຖານທີ່ສຳຄັນທີ່ຄົນສ້າງຂຶ້ນມີຫຍັງແດ່? ຄວນປົກປັກຮັກສາແນວໃດ? ເວລາເຂົ້າຊົມຄວນເຮັດແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ສະຖານທີ່ສຳຄັນຕ່າງໆທີ່ຄົນສ້າງຂຶ້ນມີ ທາດຫຼວງວຽງຈັນ, ວັດພູສີ, ທາດອິງຮັງ ແລະ ວັດພູຈຳປາສັກ; ການປົກປັກຮັກສາດ້ວຍການຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ, ປູກຕົ້ນໄມ້ ຫຼື ຫຍ້າໃສ່ບໍລິເວນເດີ່ນ, ບໍ່ເດັດດອກໄມ້, ຕ້ອງຖ່າຍໜັກຖ່າຍເບົາໃສ່ວິດ; ເວລາເຂົ້າຊົມຕ້ອງລຽນແຖວຊື້ບັດ, ບໍ່ຈັບບາຍສິ່ງຕ່າງໆ, ບໍ່ເວົ້າສຽງດັງເກີນໄປ.

- ໃຫ້ເດັກນ້ອຍທາສີຮູບພາບທາດ ແລະ ວັດໂດຍນຳໃຊ້ສີຕາມໃຈ.

# ທາດຫຼວງວຽງຈັນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ທາດຫຼວງວຽງຈັນຕັ້ງຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ທາດຫຼວງວຽງຈັນຕັ້ງຢູ່ບ້ານທາດຫຼວງເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.
- ໃຫ້ເດັກນ້ອຍທາສີຮູບພາບທາດຫຼວງໂດຍນຳໃຊ້ສີຕາມໃຈ.

# ລັກສະນະ ແລະ ຄວາມສຳຄັນຂອງທາດຫຼວງວຽງຈັນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ ແລະ ຄວາມສຳຄັນຂອງທາດຫຼວງວຽງຈັນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ລັກສະນະຂອງທາດຫຼວງເປັນແນວໃດ? ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງທາດຫຼວງເປັນທາດໃຫຍ່, ສູງ, ມີທາດນ້ອຍອ້ອມຮອບ; ຄວາມສຳຄັນ ແລະ ການສະເຫຼີມສະຫຼອງເປັນບ່ອນສັກກາລະບູຊາຂອງຊາວລາວ (ເດືອນ 12 ເພັງ ຂຶ້ນ 15 ຄ່ຳ ຈະມີບຸນ ຫຼື ພິທີສະເຫຼີມສະຫຼອງ), ເປັນບ່ອນທ່ອງທ່ຽວ ແລະ ຮຽນຮູ້ທາງວັດທະນະທຳ (ຄົນລາວ ແລະ ແຂກຕ່າງປະເທດ).
- ໃຫ້ເດັກນ້ອຍທາສີຮູບພາບທາດຫຼວງໂດຍນຳໃຊ້ສີຕາມໃຈ.

# ວັດພູສີ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ວັດພູສີຕັ້ງຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ວັດພູສີຕັ້ງຢູ່ບ້ານປ່າຂາມ, ເມືອງ ແລະ ແຂວງຫຼວງພະບາງ.
- ໃຫ້ເດັກນ້ອຍທາສີຮູບພາບວັດພູສີໂດຍນຳໃຊ້ສີຕາມໃຈ.

# ລັກສະນະ ແລະ ຄວາມສຳຄັນຂອງວັດພູສີ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ ແລະ ຄວາມສຳຄັນຂອງວັດພູສີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ລັກສະນະຂອງວັດພູສີເປັນແນວໃດ? ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງວັດຖູສີເປັນຜາສາດເຮັດດ້ວຍກ້ອນຫີນເປັນເອກະລັກ, ພະພຸດທະຮູບໃຫຍ່; ຄວາມສຳຄັນເປັນບ່ອນສັກກາລະບູຊາຂອງຊາວລາວ, ເປັນບ່ອນທ່ອງທ່ຽວ ແລະ ຮຽນຮູ້ວັດທະນະທຳຄົນລາວ, ແຂກຕ່າງປະເທດ ແລະ ເປັນເມືອງມໍລະດົກໂລກ.
- ໃຫ້ເດັກນ້ອຍທາສີຮູບພາບວັດພູສີໂດຍນຳໃຊ້ສີຕາມໃຈ.

# ທາດອີງຮັງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ທາດອີງຮີງ ຕັ້ງຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ທາດອີງຮັງຕັ້ງຢູ່ບ້ານທາດອີງຮັງ, ເມືອງໄກສອນ, ແຂວງສະຫວັນນະເຂດ.
- ໃຫ້ເດັກນ້ອຍທາສີຮູບພາບທາດອີຮັງໂດຍນຳໃຊ້ສີຕາມໃຈ.

# ລັກສະນະ ແລະ ຄວາມສຳຄັນຂອງທາດອີຮັງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ ແລະ ຄວາມສຳຄັນຂອງທາດອີງຮັງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ລັກສະນະຂອງທາດອີງຮັງເປັນແນວໃດ? ແລະ ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະຂອງທາດອີງຮັງເປັນທາດໃຫຍ່, ສູງ, ຄວາມສຳຄັນເປັນບ່ອນສັກກະລະບູຊາຂອງຊາວລາວ, ເປັນບ່ອນທ່ອງທ່ຽວ ແລະ ຮຽນຮູ້ທາດວັດທະນະທຳ (ຄົນລາວ ແລະ ແຂກຕ່າງປະເທດ).
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ທາດອີຮັງ ໂດຍນຳໃຊ້ສີຕາມໃຈ.

# ວັດພູຈຳປາສັກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທີ່ຕັ້ງຂອງວັດພູຈຳປາສັກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ວັດພູຈຳປາສັກຕັ້ງຢູ່ໃສ?
- ໃຫ້ເດັກນ້ອຍສະຫຼຸບ: ວັດພູຈຳປາສັກຕັ້ງຢູ່ບ້ານໜອງສະ, ເມືອງ ແລະ ແຂວງຈຳປາສັກ.
- ໃຫ້ເດັກນ້ອຍທາສີຮູບພາບວັດພູໂດຍນຳໃຊ້ສີຕາມໃຈ.

# ລັກສະນະ ແລະ ຄວາມສຳຄັນຂອງວັດພູຈຳປາສັກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ ແລະ ຄວາມສຳຄັນຂອງວັດພູຈຳປາສັກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ລັກສະນະຂອງວັດພູຈຳປາສັກເປັນແນວໃດ? ມີຄວາມສຳຄັນແນວໃດ?
- ໃຫ້ເດັກນ້ອຍສະຫຼຸບ: ລັກສະນະເປັນຜາສາດເຮັດດ້ວຍກ້ອນຫີນເປັນເອກະລັກ, ມີພະພຸດທະຮູບໃຫຍ່; ຄວາມສຳຄັນເປັນບ່ອນສັກກາລະບູຊາ (ເດືອນ 3 ເພັງ ຂຶ້ນ 15 ຄໍ່າ ມີບຸນ ແລະ ພິທີສະເຫຼີມສະຫຼອງ), ເປັນບ່ອນທ່ອງທ່ຽວ ແລະ ຮຽນຮູ້ທາງວັດທະນະທຳຄົນລາວ ແລະ ແຂກຕ່າງປະເທດ; ເປັນມໍລະດົກໂລກແຫ່ງທີ 2 ຂອງລາວ.
- ໃຫ້ເດັກນ້ອຍທາສີຮູບພາບວັດພູຈຳປາສັກໂດຍນຳໃຊ້ສີຕາມໃຈ.